ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 27 ພະຈິກ ຫາ 01 ທັນວາ 2023



ເຂົ້າໜຽວເມັດຂາວ ຈາກ ແຂວງ ຜົ້ງສາລີ ແລະ ເຂົ້າຈ້າວຫອມ ເມືອງ ໝອກ ແຂວງ ຊຽງຂວາງ ໄດ້ຮັບລາງວັນຊະນະເລີດ ເວທີປະກວດແນວພັນເຂົ້າ ໃນງານວາງສະແດງ ຄວາມຫຼາກຫຼາຍຂອງແນວພັນພືດເພື່ອຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການປະຈຳປີ 2023

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ເຂົ້າໜຽວເມັດຂາວ ຈາກແຂວງ ຜົ້ງສາລີ ແລະ ເຂົ້າຈ້າວຫອມ ເມືອງ ໝອກແຂວງ ຊຽງຂວາງ ໄດ້ຮັບລາງວັນຊະນະເລີດ

## ເວທີການປະກວດແນວພັນເຂົ້າໃນງານວາງສະແດງ ຄວາມຫຼາກຫຼາຍຂອງແນວພັນພືດ ເພື່ອຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ປະຈໍາປີ 2023

ງານວາງສະແດງຄວາມຫຼາກຫຼາຍຂອງແນວພັນພືດ ເພື່ອຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ປະຈໍາປີ 2023 ໄດ້ຈັດຂຶ້ນ ໃນລະຫວ່າງວັນທີ 31 ຕຸລາ ຫາ 1 ພະຈິກ 2023 ຜ່ານນີ້, ໂດຍການຮ່ວມເປັນປະທານເປີດງານ ຂອງ ທ່ານ ທອງພັດ ວົງມະນີ ຮອງລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ແລະ ທ່ານ ດວງຈັນ ລໍປາຍີງ ຫົວໜ້າແຜນງານ ອົງການ OXFAM ປະຈໍາ ສປປ ລາວ, ທ່ານ ບຸນຈັນ ກົມບຸນຍະສິດ ຫົວໜ້າ ກົມປູກຝັງ ແລະ ທ່ານ ປອ. ນ. ຈັນທະຄອນ ບົວລະພັນ ຮອງຫົວໜ້າສະຖາບັນຄົ້ນຄວ້າ, ກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ. ໃນງານວາງ ສະແດງ ຄັ້ງນີ້ ມີແຂກເຂົ້າຮ່ວມທີ່ມາຈາກ ສະຖາບັນຄົ້ນຄວ້າກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ, ກົມປູກຝັງ, ບັນດາກົມອ້ອມຂ້າງກະຊວງ, ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ແລະ ກຸ່ມເຄືອຄາຍຊາວກະສິກອນ ທົ່ວປະເທດເຂົ້າຮ່ວມ.

ງານວາງສະແດງ ຄວາມຫຼາກຫຼາຍຂອງແນວພັນພືດ ເພື່ອຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ປະຈໍາປີ 2023 ແມ່ນຫນຶ່ງໃນກິດຈະກໍາຂອງໂຄງການປູກພືດໃຫ້ມີຄວາມຫຼາກຫຼາຍ ເພື່ອການຄໍ້າປະກັນສະບຽງອາຫານ ເຊິ່ງໄດ້ຮັບທຶນສະໜັບສະໜູນຈາກ ອົງການ SIDA ໂດຍຜ່ານ ອົງການ OXFAM ໂດຍປີນີ້ງານດັ່ງກ່າວແມ່ນຈັດຂຶ້ນເປັນຄັ້ງທີ 3, ການຈັດງານຄັ້ງນີ້ເປົ້າໝາຍ ເພື່ອເຜີຍແຜ່ຜົນການຈັດຕັ້ງປະຕິບັດໂຄງການ ນັບແຕ່ປີ 2019-2023, ສົ່ງເສີມແນວພັນ ຂອງຊາວກະສິກອນທີ່ຄັດເລືອກໄດ້ ຈາກໂຮງຮຽນຊາວນາໃຫ້ເປັນທີ່ຍອມຮັບຂອງຕະຫຼາດ, ເຜີຍແຜ່ຄວາມຫຼາກຫຼາຍ ແນວພັນພືດຂອງຊາວກະສິກອນ ທົ່ວປະເທດ ເພື່ອສົ່ງເສີມເຂົ້າໃນວຽກງານຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ, ທັງສ້າງ












ເງື່ອນໄຂທີ່ດີ ໃຫ້ຊາວກະສິກອນ ໃຫ້ມີໂອກາດແລກປ່ຽນບົດຮຽນ ລະຫວ່າງຊາວນາ, ນັກຄົ້ນຄວ້າ, ອົງການຈັດຕັ້ງຕ່າງໆ ແລະ ຜູ້ປະກອບການທີ່ກ່ຽວຂ້ອງ ທາງດ້ານການຄັດເລືອກແນວພັນ, ການຜະລິດ ແລະ ແລກປ່ຽນແນວພັນພືດ, ພາຍໃນງານວາງສະແດງໄດ້ມີແນວພັນເຂົ້າ ຫຼາຍກວ່າ 50 ແນວພັນ ທົ່ວປະເທດ, ແນວພັນພືດພື້ນເມືອງ, ທ້ອງຖິ່ນທີ່ສຳຄັນ ຫຼາຍກວ່າ 30 ຊະນິດ ມາວາງສະແດງຈຳໜ່າຍ, ການປະກວດເຂົ້າແຊບ ປະຈຳປີ 2023, ການປະກວດຄວາມຫຼາກຫຼາຍຂອງມັນພື້ນເມືອງ ທີ່ຫົວໃຫຍ່ທີ່ສຸດ (ເຜືອກ, ມັນອິດ, ມັນອ້ອນ ມັນແຊງ ແລະ ອື່ນໆ), ການປະກວດຜະລິດຕະພັນການແປຮູບຈາກກ້ວຍພື້ນເມືອງ, ການປະກວດການຕົບແຕ່ງຮ້ານວາງສະແດງ ຄວາມຫຼາກຫຼາຍຂອງຊະນິດພືດ, ການມອບໃບຍ້ອງຍໍໃຫ້ກັບທີມງານ ແລະ ຊາວກະສິກອນທີ່ມີສ່ວນຮ່ວມໃນການພັດທະນາແນວພັນໃໝ່, ນອກນີ້ຍັງມີເວທີປະຊຸມສຳມະນາແລກປ່ຽນກ່ຽວກັບການລາຍງານຜົນສຳເລັດຂອງໂຄງການ, ການນຳສະເໜີຜົນສຳເລັດຂອງການພັດທະນາແນວພັນພືດໃນໂຮງຮຽນຊາວນາຈາກໂຮງຮຽນຊາວນາຂອງໂຄງການ, ການເຜີຍແຜ່ດຳລັດວ່າດ້ວຍການຄຸ້ມຄອງແນວພັນພືດ ສະບັບປັບປຸງໃຫມ່ ແລະ ຂັ້ນຕອນການຂຶ້ນທະບຽນແນວພັນໃຫມ່ ໃຫ້ກັບຂັ້ນແຂວງ, ເມືອງ ແລະ ຊາວກະສິກອນ.

ຜ່ານການປະກວດ ແລະ ໃຫ້ຄະແນນຂອງຄະນະກຳມະການໃນເວທີການປະກວດຄັ້ງນີ້ ລາງວັນຊະນະເລີດການປະກວດ ປະເພດແນວພັນເຂົ້າ: ລາງວັນທີ 1 ປະເພດແນວພັນ ເຂົ້າໜຽວ ໄດ້ແກ່: ເຂົ້າເມັດຂາວ ຈາກແຂວງ ຜົ້ງສາລີ (ເຊິ່ງມີຄຸນນະລັກສະນະພິເສດຄື: ມີເມັດເຂົ້າຂາວສວຍງາມ ພ້ອມທັງກິ່ນຫອມ ແລະ ກິນອ່ອນນຸ້ມດີ) ແລະ ລາງວັນທີ 1 ໃນ ປະເພດແນວພັນ ເຂົ້າຈ້າວ

ໄດ້ແກ່: ເຂົ້າຈ້າວຫອມເມືອງໝອກ ຈາກແຂວງຊຽງຂວາງ (ມີຄຸນລັກສະນະພິເສດຄື: ເປັນເຂົ້າຈ້າວ ແມ່ນເປັນເຂົ້າທີ່ມີຄວາມອ່ອນ ລົດຊາດດີ ຫຸງແລ້ວຂື້ນໝໍ້ ເຂົ້າບໍ່ເລະ ບໍ່ເຫຼວ ເປັນເມັດຮຽງງາມດີ), ລາງວັນຊະນະເລີດ ລາງວັນທີ 1 ໃນ ປະເພດແນວພືດ (ມັນ) ໄດ້ແກ່: ແຂວງໄຊຍະບູລີ, ຜູ້ທີ່ໄດ້ຮັບ ລາງວັນຊະນະເລີດ ລາງວັນທີ 1 ໃນ ປະເພດຜະລິດຕະພັນແປຮູບຈາກກວ້ຍ ໄດ້ແກ່: ແຂວງສະຫວັນນະເຂດ ແລະ ຜູ້ທີ່ໄດ້ຮັບ ລາງວັນຊະນະເລີດ ລາງວັນທີ 1 ໃນ ປະເພດຈັດຮ້ານວາງສະແດງສວຍງາມ ໄດ້ແກ່: ຮ້ານວາງສະແດງ ຂອງ ພະແນກກະສິກຳ ແລະ ປ່າໄມ້ ແຂວງໄຊຍະບູລີ ໂດຍໃຫ້ກຽດມອບລາງວັນຊະນະເລີດຂອງ ທ່ານ ດວງຈັນ ປ່າຢັ້ງ ຫົວໜ້າແຜນງານ, ອົງການ OXFAM, ການປະກວດຄັ້ງນີ້ໄດ້ສະແດງໃຫ້ເຫັນຄວາມຫຼາກຫຼາຍຂອງແນວພັນພືດຂອງຊາວກະສິກອນ, ເພື່ອເຮັດໃຫ້ແນວພັນທີ່ດີໄດ້ຮັບການຍອມຮັບເປັນວົງກວ້າງ ສົ່ງເສີມການຕະຫຼາດ ສົ່ງເສີມເຂົ້າໃນວຽກງານຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການອີກດ້ວຍ.




ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສີງຄາມ
ທ່ານ ສີສະຫວາດ ຫອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໄຊລາ ສີມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;